# ບົດທີ 6

# ກິດລະບຽບຂອງອານາຈັກພາກທີ່ ສີ່

## (ຫຼື ສຸດທ້າຍ)

ກິດລະບຽບແຫ່ງ

_______________________

ມທ 7:_____ເຖິງ_____




ກິດລະບຽບແຫ່ງ

_______________________

ມທ 7:_____ເຖິງ_____




ກິດລະບຽບແຫ່ງ

_______________________

ມທ 7:_____ເຖິງ_____




*ກ່ອນທີ່ເຮົາຈະຕັ້ງຕົ້ນຮຽນເລື່ອງໃນ ມັດທາຍ ບົດ 7 ໃຫ້ທ່ານກັບໄປເບິ່ງໜ້າປົກ ບົດທີ 5 ແລ້ວຂຽນຄວາມທີ່ຂາດເລື່ອງກິດລະບຽບຕ່າງໆໃນ ມັດທາຍ ບົດ 6 ໃຊ້ພະຄຳພີກໍ່ໄດ້.*

*ໃຫ້ທ່ານກັບໄປເບິ່ງໜາປົກບົດນີ້ ເຫັນຮູບເຫຼົ່ານັ້ນບໍ່? ຫຼັງຈາກຮຽນບົດນີ້ໃຫ້ສຳເລັດແລ້ວ ທ່ານຈະສາມາດຂຽນຄວາມທີ່ຂາດໃນບົດນີ້ດ້ວຍ.*

**1** ກ. ໃນ ມັດທາຍ ບົດ 6 ມີກິດລະບຽບຈັກຈຸດ? ________________________________

ຂ. ໃນ ມັດທາຍ ບົດ 7 ເດ ມີຈັກຈຸດ? ___________________________________

## ຈຸດທີ ເຈັດ (ມທ 7:1-6)

**2** ໃຫ້ອ່ານ ມັດທາຍ 7:1-6
ເຫັນຜິດຂອງຜູ້ອື່ນງ່າຍຫຼາຍເນາະ! ເຊັ່ນດຽວກັນເຫັນຜິດຂອງເຮົາເອງຍາກຫຼາຍ. ໃນ ມັດທາຍ 7:3 ພະເຢຊູ ຍົກຄວາມປຽບທຽບມາສອງປະການສະແດງເຖິງເຫດການນັ້ນ. ຕົວຢ່າງສອງປະການນັ້ນຄືຫຍັງ? _______________________________________________

ແລະ ___________________________________________________________

**3** ຄົນຈອງຫອງມັກຊີ້ບອກຜິດຂອງຜູ້ອື່ນ (ຂີ້ເຍື່ອ) ແຕ່ບໍ່ສຳຫຼວດຄວາມຜິດຂອງຕົວເອງຈັກເທື່ອ (ຄືໄມ້ທ່ອນ) ຄົນ ຢ່າງນັ້ນຕິຕຽນເລື່ອງຜູ້ອື່ນ ແຕ່ບໍ່ສຳນຶກເລື່ອງໃນຕົວເອງ.
ໃຫ້ທ່ານກັບໄປເບິ່ງຮູບກາຕູນອັນທຳອິດ ໃນສອງຄົນນັ້ນແມ່ນຄົນໃດ?

_______ ຜິດໜ້ອຍ (ມີຂີ້ເຍື່ອໃນຕາ)

_______ ຜິດຫຼາຍ (ມີໄມ້ທ່ອນໃນຕາ)

| |
|---|
| ຝຶກ: ໃຫ້ທ່ານເອົາສໍສີຟ້າມາຂີດວົງມົນອ້ອມຄຳວ່າ "ຂີ້ເຍື່ອ" ແລະ "ໄມ້ທ່ອນ" ໃນ ມັດທາຍ 7:3 |

**4** ພະເຈົ້າບໍ່ນິຍົມຄົນຈອງຫອງດອກ! ທີ່ ພະເຢຊູ ວ່າ "ຈົ່ງເອົາໄມ້ທ່ອນອອກຈາກຕາຂອງທ່ານກ່ອນ"ໝາຍ ຄວາມວ່າຄວນຈະເຮັດຢ່າງໃດກ່ອນຈະກ່າວໂທດຜູ້ອື່ນ? _______________

_______________________________________________________________

**5** ຜູ້ມີສ່ວນໃນອານາຈັກສະຫວັນເປັນຄົນຢ່າງໃດ? (ເລືອກ)

_______ ຈອງຫອງ _______ ຖ່ອມຕົວ _______ ມັກກ່າວໂທດເພິ່ນ

**6** ໃຫ້ທ່ານເລືອກວ່າແມ່ນກົດລະບຽບໃດຕໍ່ໄປນີ້ທີ່ຖືກກັບຈຸດ ມທ 7:1-6 ນີ້:
(ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ)
ກ. ກົດລະບຽບແຫ່ງຄວາມຈຳເປັນ.
ຂ. ກົດລະບຽບແຫ່ງຄວາມຖ່ອມຕົວ.
ຄ. ກົດລະບຽບແຫ່ງຄວາມຄົງທີ່.

**7** ກ. ພະເຢຊູ ຍົກຄວາມປຽບທຽບສອງປະການໃດ ມາບັນລະຍາຍເລື່ອງການຖ່ອມຕົວ?

_____________________________ ແລະ ______________________________

ຂ. ໃນກົດລະບຽບເຫຼົ່ານີ້ ພະເຢຊູ ສອນຫຍັງກ່ຽວກັບການຖ່ອມຕົວ. (ໃຫ້ອະທິບາຍຕາມຄວາມຄິດເຫັນຂອງ ທ່ານເອງ) _____________________________________________

**8** ກ່ອນຈະເລີກສອນກ່ຽວກັບການຖ່ອມໃຈລົງ ພະເຢຊູ ຍັງຍົກຕົວຢ່າງອີກປະການໜຶ່ງມາຄື: ຢ່າໂຍນໄຂ່ມຸກໃສ່ ຕໍ່ໜ້າໝູ່ເລື່ອງນັ້ນມີເນື້ອຄວາມວ່າຖ່ອມໃຈລົງກໍ່ດີ ແຕ່ບໍ່ຕ້ອງດູຖູກຕົວເອງ. ໃຫ້ອ່ານ ມທ 7:6 ແມ່ນແທ້ທີ່ວ່າຄຣິດສະຕຽນທຸກຄົນຄວນຈະເຮັດດີຕອບແທນການຊົ່ວເພື່ອເປັນຕົວຢ່າງຄຣິດສະຕຽນທີ່ດີ ແຕ່ຖ້າເຫັນວ່າມີຄົນກິນແຮງເຮົາໄປລ້າໆໂດຍບໍ່ມີເຫດເຮົາຈະເຮັດຢ່າງໃດ? ຄັນຖ້າຍັງມີຄວາມຫວັງໜ້ອຍດຽວທີ່ເຂົາມີຄວາມຕ້ອງການດ້ວຍຈິງໃຈກໍ່ຈົ່ງອົດສາເອົາແຕ່ຖ້າຜົນສຸດທ້າຍເບິ່ງຄືວ່າບໍ່ມີປະໂຫຍດເລີຍບໍ່ຕ້ອງໃຫ້ເຂົາກິນແຮງອີກຕໍ່ໄປ

**ແຕ່ວ່າ**

<u>ຈົ່ງສັງເກດວ່າພະເຢຊູຍັງຍົກໂທດໃຫ້ຄົນທີ່ຄຶງພະອົງໄວ້ທີ່ໄມ້ກາງແຂນ ເນີ!</u>

ໃຫ້ທ່ານອ່ານ ມທ 7:6 ອີກເທື່ອໜຶ່ງແລ້ວໃຫ້ທ່ານເອງຂຽນວິທີ ທີ່ຈະປະຕິບັດຕາມໃນຊີວິດຂອງທ່ານເອງ ______________________________________________

______________________________________________

**9** ພະເຢຊູສອນວ່າຈົ່ງຖ່ອມຕົວລົງກໍ່ດີ ແຕ່ບໍ່ຄວນທີ່ຈະດູຖູກຕົວເອງໃນມັດທາຍບົດ 7 ຂໍ້ໃດ? _

**10** ຄຳທີ່ວ່າ "ຢ່າໂຍນໄຂ່ມຸກໃສ່ຕໍ່ໜ້າໝູ່" ມີເນື້ອຄວາມວ່າເຖິງຈະຖ່ອມຕົວລົງກໍ່ດີ ແຕ່ຢ່າດູຖູກຂອງປະເສີດ.ໝາ ແລະໝູ ຮູ້ຈັກເລືອກຂອງປະເສີດບໍ່? ______________________

| |
|---|
| ຝຶກ: ໃຫ້ທ່ານເອົາສໍສີຟ້າຂຽນຄຳວ່າ "ຖ່ອມຕົວ" ໃນພະຄຳພີກ່ອນ ມທ 7:1 |

**11** ພະເຢຊູສອນເລື່ອງການຖ່ອມຕົວໃນ ມັດທາຍ ບົດໃດ ຂໍ້ໃດແດ່? ________________

## ຈຸດທີ ແປດ (ມທ 7:8-12)

*ໃຫ້ທ່ານອ່ານ ມທ 7:7-12 ແລ້ວ*

**12** ຜູ້ທີ່ມີສ່ວນໃນອານາຈັກຂອງ ພະເຈົ້າ ຍັງມີຄວາມຈຳເປັນດ້ານການຢູ່ກິນເໝືອນຢ່າງກັບທຸກຄົນໃນໂລກ ຕ່າງແຕ່ ຄົນຄຣິດສະຕຽນມີສິດທີ່ຈະອ້ອນວອນໄປຫາພະເຈົ້າ.
ໃນ ມັດທາຍ 7:7 ເຮົາຈົ່ງໝັ່ນ ______________ ແລ້ວຈະຊົງປະທານໃຫ້.
ຈົ່ງໝັ່ນ ______________ ແລ້ວຈະພົບ.
ຈົ່ງໝັ່ນ ______________ ແລ້ວຈະໄຂໃຫ້. (ຈົ່ງຕື່ມຄວາມທີ່ຂາດ)

**13** ເຮົາຈະມາຫາ ພະເຈົ້າດ້ວຍທາງອ້ອນ ____________________ . (ຕື່ມຄວາມທີ່ຂາດ)

**14** ທີ່ ພະເຢຊູ ສອນເຂົາໃຫ້ ຂໍໃຫ້ຊອກໃຫ້ເຄາະໝາຍຄວາມວ່າເຂົາຄວນຈະສະເໜີຄວາມຕ້ອງການຕໍ່ໜ້າພະເຈົ້າຢູ່ ເລື້ອຍ ໆ ເຮົາຄວນຈະອ້ອນວອນຫາໃຜຢູ່ເລື້ອຍໆຈົນພົບ?

______________________________________________

| |
|---|
| ຝຶກ: ໃຫ້ທ່ານເອົາສໍສີຟ້າຂຽນຄຳວ່າ "ອ້ອນວອນ" ກ່ອນ ມທ 7:7 ໃຫ້ ຂີດເສັ້ນກ້ອງ ຄຳ "ຂໍ" "ຊອກ" ແລະ "ເຄາະ" ໃນ ມທ 7:7 ເຊັ່ນດຽວກັນ. |

**15** ມັດທາຍ 7:7-12 ຍົກສະເໜີອາຫານສອງຢ່າງໃດທີ່ຂໍຈາກ ພະເຈົ້າໄດ້? _____________

**16** ຄຳວ່າ "ຂອງດີ" ໃນມທ 7:9-11 ອ້າງເຖິງເຂົ້າ ແລະ ປາ ແຕ່ "ຂອງດີ" ໃນລູກາ 11:13 ອ້າງເຖິງຫຍັງ? ______________________________________________________

**17** ແມ່ນຮູບໃດຢູ່ໜ້າປົກບົດນີ້ ທີ່ສະແດງເຖິງຂອງດີທີ່ພໍ່ຈະໃຫ້ລູກ? (ເລືອກ)

_______ ຮູບ ຄ _______ ຮູບ ງ

**18** ຕາມຄຳສອນໃນ ມທ 6:25-34 ແລະ ມທ 7:7-13 ແລະ ລູກາ 11:13 ພະເຈົ້າ ຈະປະທານສິ່ງໃດຕໍ່ໄປນີ້ໃຫ້ຄຼິດ ສະຕຽນທີ່ຕ້ອງການ? (ເລືອກໝາຍເອົາຂໍ້ທີ່ຖືກ)

ກ. ເຂົ້າປາອາຫານ
ງ. ນ້ຳພໍກິນ
ຂ. ເຮືອນດີງາມກວ່າໝູ່
ຈ. ທໍລະທັດສີ ແລະ ວີດີໂອ
ຄ. ພະວິນຍານບໍລິສຸດ
ສ. ເຄື່ອງນຸ່ງທີ່ຈຳເປັນ.

**19** ໃນລາຍຊື່ສາມປະການຕໍ່ໄປນີ້ ມີສອງປະການໃດທີ່ ພະເຈົ້າຈະປະທານໃຫ້ຄຼິດສະຕຽນທີ່ຂໍຈາກພະອົງ? (ເລືອກໝາຍເອົາ 2 ຂໍ້)

ກ. ສິ່ງທີ່ຈຳເປັນຝ່າຍຮ່າງກາຍ.
ຂ. ຄວາມຟຸມເຟືອຍ
ຄ. ສ່ວນຈຳເປັນດ້ານຈິດວິນຍານ

**20** ໃຫ້ທ່ານເລືອກວ່າແມ່ນກົດລະບຽບໃດຕໍ່ໄປນີ້ທີ່ຖືກກັບຈຸດໃນ ມທ 7:7-12

ກ. ກົດລະບຽບແຫ່ງຄວາມຈຳເປັນ
ຂ. ກົດລະບຽບແຫ່ງຄວາມຖ່ອມຕົວ
ຄ. ກົດລະບຽບແຫ່ງຄວາມຄົງທີ່

**21** ພະເຢຊູ ເຄີຍຍົກຕົວຢ່າງມາປຽບທຽບກົດລະບຽບທີ່ເຮົາຮຽນມາແລ້ວຕົວຢ່າງບາງປະການນັ້ນດີທີ່ສຸດ ແຕ່ຖ້າຈະ ເອົາ ສິ່ງຂອງໃນໂລກນີ້ມາປຽບທຽບກັບເລື່ອງ ພະເຈົ້າຕົວຢ່າງເຫຼົ່ານັ້ນກໍ່ຍັງມີຈຸດອ່ອນ ຫຼື ຂໍ້ບົກຜ່ອງດ້ວຍ. ຂອງ ປະທານຂອງພະບິດາເຈົ້ານັ້ນ ດີກວ່າຂອງທີ່ພໍ່ຈະໃຫ້ກັບລູກຂອງຕົນແຕ່ຄຳທີ່ ພະເຢຊູຍົກຕົວຢ່າງວ່າພໍ່ຍ່ອມໃຫ້ຂອງດີແກ່ລູກ ນັ້ນກໍ່ອາດມີອັນບົກຜ່ອງດ້ວຍວ່າຄວາມປຽບທຽບໃດໆກໍ່ມີສ່ວນບົກຜ່ອງບໍ່ຫຼາຍກໍ່ໜ້ອຍເພາະເລື່ອງພະບິດາຍາກທີ່ຈະຫາຄຳໃດມາປຽບແລະອະທິບາຍໄດ້. ພະເຢຊູ ຍົກຕົວຢ່າງໃດມາປຽບທຽບຂອງປະທານທີ່ ພະເຈົ້າຈະຍົກມາໃຫ້? (ເລືອກເອົາຂໍ້ທີ່ຖືກ)

ກ. ເລື່ອງພໍ່ທີ່ໜີປະລູກ
ຂ. ເລື່ອງໄຂ່ມຸກຕໍ່ໜ້າໝູ່
ຄ. ເລື່ອງພໍ່ຈະເອົາຂອງດີໃຫ້ລູກ

| |
|---|
| ຝຶກ: ໃຫ້ທ່ານຂຽນຄຳວ່າ "ຈຳເປັນ" ກ່ອນ ມທ 7:7 ດ້ວຍສໍສີຟ້າ |

## ຈຸດທີ ເກົ້າ (ມທ 7:13-29)

**22** ໃຫ້ທ່ານອ່ານ ມທ 7:13-29 ຕະຫຼອດ ແລ້ວໃຫ້ກັບໄປອ່ານ ຂໍ້ 28 ແລະ 29 ອີກເທື່ອໜຶ່ງ.
ກ.ແມ່ນໃຜສັ່ງສອນເໝືອນຜູ້ມີລິດອຳນາດ? ________________________________
ຂ.ແມ່ນໃຜສັ່ງສອນເໝືອນຜູ້ບໍ່ມີລິດອຳນາດ? ______________________________

**23** ໃນກົດລະບຽບຈຸດສຸດທ້າຍນີ້ ພະເຢຊູບອກສ່ວນແຕກຕ່າງລະຫວ່າງຄຳສອນທີ່ຈິງແລະຄຳສອນທີ່ບໍ່ຈິງ. ພະເຢ ຊູຍົກເລື່ອງຄົນກໍ່ສ້າງສອງຄົນມາເປັນຕົວຢ່າງ ຜູ້ໜຶ່ງກໍ່ສ້າງໃສ່ເທິງ ດານຫີນ ອີກຜູ້ໜຶ່ງສ້າງໃສ່ເທິງ ຫາດຊາຍ ອັນໃດໝາຍເຖິງ:
ກ. ຄວາມສັ່ງສອນທີ່ແທ້ຈິງ? ____________________________________________
ຂ. ຄວາມສັ່ງສອນທີ່ບໍ່ຈິງ? ______________________________________________

**24** ຫຼັກຄວາມສອນທີ່ແທ້ຈິງເໝືອນຢ່າງການກໍ່ສ້າງຕຶກເທິງດານຫີນເຊິ່ງເປັນຮາກຖານທີ່ໄວ້ໃຈໄດ້. ຈົ່ງອ່ານ ມທ 7:25 ແລ້ວໃຫ້ທ່ານເລືອກວ່າແມ່ນກົດລະບຽບໃດຕໍ່ໄປນີ້ທີ່ຖືກກັບຈຸດໃນ ມທ 7:13-29 ນີ້:
ກ. ກົດລະບຽບແຫ່ງຄວາມຄົງທີ່.
ຂ. ກົດລະບຽບແຫ່ງຄວາມຖ່ອມຕົວ.
ຄ. ກົດລະບຽບແຫ່ງຄວາມຈຳເປັນ

| |
|---|
| ຝຶກ: ໃຫ້ເອົາສໍສີຟ້າຂຽນຄຳວ່າ "ຄົງທີ່" ກ່ອນ ມທ 7:13 |

**25** ເພື່ອຈະເນັ້ນຄຳສ່ວນແຕກຕ່າງກັນລະຫວ່າງຄວາມສອນທີ່ຈິງແລະຄວາມສອນບໍ່ຈິງ ພະເຢຊູຍົກຕົວຢ່າງທັງໝົດ 3 ປະການເຊິ່ງປະກອບດ້ວຍປະການລະຄູ່ກົງກັນຂ້າມ.
(ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້)
ກ. ມັດທາຍ 7:13, 14 ອ້າງເຖິງ _______________ ສອງປ່ອງ.
ຂ. ມັດທາຍ 7:15-23 ອ້າງເຖິງ _______________ ສອງຕົ້ນ.
ຄ. ມັດທາຍ 7:24-29 ອ້າງເຖິງຮາກຖານຂອງ _____________ ສອງຫຼັງ.

| |
|---|
| ຝຶກ: ເພື່ອໃຫ້ທ່ານຈື່ຄວາມປຽບທຽບ 3 ຄູ່ນັ້ນໄວ້ດີໆ ໃຫ້ທ່ານເອົາສໍສີຟ້າຂີດເສັ້ນອ້ອມຄຳວ່າ "ປະຕູ" ໃນ ມທ 7:13, "ຕົ້ນໄມ້" ໃນ ມທ 7:17 ແລະ "ຮາກ" ໃນ ມທ 7:24 |

**26** ໃຫ້ທ່ານກັບໄປເປີດເບິ່ງໜ້າປົກບົດນີ້ ໃນສາມຮູບຄື: ຮູບ ຈ ຮູບ ສ ແລະ ຮູບ ຊ
ຮູບໃດໝາຍເຖິງປະຕູສອງປ່ອງ? ________________________________________
ຮູບໃດໝາຍເຖິງຕົ້ນໄມ້ສອງຕົ້ນ? ______________________________________
ຮູບໃດອ້າງເຖິງຮາກຕຶກສອງຫຼັງ? ______________________________________

**27** ໃຫ້ທ່ານອ່ານ ໂຢຮັນ 10:9 ປະຕູຄືໃຜ? ______________________________

ໃຫ້ທ່ານອ່ານ ໂຢຮັນ 14:6 ທາງຄືໃຜ? ______________________________

**28** ຂໍໃຫ້ອ່ານ ມັດທາຍ 7:15-23 ອີກໃນຄຳປຽບທຽບປະການທີສອງນີ້ ພະເຢຊູສອນໃຫ້ຜູ້ຟັງຮັກສາຄວາມຄິງທີ່ໄວ້ ດ້ວຍສັງເກດຮູ້ຜົນຕົ້ນໄມ້ດີຫຼືບໍ່ດີ. ພະເຢຊູ ສອນວ່າຈົ່ງລະວັງໃຜ? (ຂໍ້ 15)

______________________________________________________________

**29** ກ. ມັດທາຍ 7:15 ບອກວ່າ ຜູ້ປະກາດພະທຳບໍ່ຈິງປອມຕົວ ຄືຫຍັງ? ______________

ຂ. ແຕ່ທີ່ຈິງພາຍໃນເຂົາເປັນຕົວຫຍັງ? ______________________________

ຄ. ໃນ ມັດທາຍ ບົດ 6 ພະເຢຊູ ສອນວ່າຜູ້ທີ່ແກ້ງຕາງຕີເຮັດຢ່າງໜຶ່ງຂ້າງນອກແຕ່ຂ້າງໃນທີ່ຈິງເປັນຝ່າຍກົງກັນ ຂ້າມຄືຄົນໜ້າແບບໃດໃຈແບບໃດ? ______________________

ງ. ໃນສະໄໝພະເຢຊູຜູ້ປະກາດພະທຳບໍ່ຈິງຄືພວກນັກ ______________________

ແລະ ພວກຟາ ______________________________________________

ຈ. ໃນປະເທດລາວທຸກວັນນີ້ມີຜູ້ໃດທີ່ປະກາດພະທຳບໍ່ຈິງ? ____________________

______________________________________________________________

**30** ມັດທາຍ 7:15-23 ຊີ້ບອກວິທີສັງເກດຮູ້ຜູ້ປະກາດພະທຳບໍ່ຈິງ ສ່ວນຫຼາຍເຂົາມີຮູບຮ່າງທີ່ດີ ພະເຢຊູ ບອກວ່າ ເຂົາຈະມາປອມຕົວວ່າເປັນຄົນດີ ບໍ່ມີອັນຕະລາຍ.ໃນຂໍ້ 22 ເຂົາຈະອວດຕໍ່ພະເຈົ້າດັ່ງຄຳເວົ້າ 3 ປະການຕໍ່ໄປນີ້: (ຕື່ມຄວາມທີ່ຂາດລຸ່ມນີ້)

ກ. ພວກຂ້າພະອົງ ໄດ້ ______________________________ ໃນພະນາມຂອງພະອົງ.

ຂ. ພວກຂ້າພະອົງ ໄດ້ ______________________________ ໃນພະນາມຂອງພະອົງ.

ຄ. ພວກຂ້າພະອົງ ໄດ້ ______________________________ ໃນພະນາມຂອງພະອົງ ບໍ່ແມ່ນຫຼື.

**31** ໃນມທ 7:21 ແມ່ນຄົນໃດຈະເຂົ້າໃນແຜ່ນດິນສະຫວັນ? ______________________

| |
|---|
| ຝຶກ: ໃຫ້ເອົາສໍສີແດງຂີດກ້ອງຄຳວ່າ “ແຜ່ນດິນສະຫວັນ” ໃນ ມັດທາຍ 7:21 |

**32** ໃນມັດທາຍ 7:16-20 ພະເຢຊູ ຍົກຕົວຢ່າງໃດມາປຽບທຽບ

ກ. ຜູ້ປະກາດພະທຳທີ່ແທ້ຈິງ? ______________________________________

ຂ. ຜູ້ປະກາດພະທຳທີ່ບໍ່ຈິງ? ______________________________________

ຄ. ຈະຮູ້ຄວາມແຕກຕ່າງກັນຢ່າງໃດ? (ມທ 7:20) ______________________________

**33** ສາດສະໜາໃດທີ່ບໍ່ຮັບຮູ້ວ່າພະເຢຊູເປັນພະເຈົ້າມາຮັບສະພາບເປັນມະນຸດຄືຄຳສັ່ງສອນຈິງຫຼືບໍ່ຈິງ? ______________________________________________________

**34** ເຮົາຈະຮູ້ຈັກຜູ້ປະກາດພະທຳທີ່ແທ້ຈິງຢ່າງໃດ? (ເລືອກໝາຍເອົາຂໍ້ທີ່ຖືກ)

ກ. ຜູ້ທີ່ວ່າ “ພະອົງເຈົ້າ ພະອົງເຈົ້າ”

ຂ. ຜູ້ທີ່ເຮັດຕາມນ້ຳພະໄທຂອງ ພະເຈົ້າ.
ຄ. ຜູ້ທີ່ປ່າວປະກາດພະທຳໃນພະນາມຂອງ ພະອົງ.
ງ. ຜູ້ທີ່ຂັບໄລ່ຜີອອກໃນພະນາມຂອງພະອົງ.
ຈ. ຜູ້ທີ່ເຮັດການອິດທິລິດໃນພະນາມຂອງພະອົງ

**35** ຄົນທີ່ຈະເຮັດຕາມນ້ຳພະໄທຂອງພະອົງຕ້ອງຮູ້ນ້ຳພະໄທນັ້ນດ້ວຍ.ຜູ້ປະກາດພະທຳບໍ່ຈິງມີຜົນບໍ່ໄດ້ເພາະເຂົາບໍ່ຮູ້. ສະເພາະເຮົາຈະສັງເກດຮູ້ຜູ້ປະກາດພະທຳບໍ່ຈິງດ້ວຍຫຍັງ? ________

**36** ກ. ຜູ້ທີ່ມີຜົນດີຄືຕ້ອງຮູ້ຈັກນ້ຳພະໄທຂອງໃຜກ່ອນ? ____________________________
ຂ. ຜູ້ປະກາດພະທຳບໍ່ຈິງຈະມີຜົນຢ່າງໃດ? __________________________________
ຄ. ເຂົາເຮັດຜົນດີບໍ່ໄດ້ເພາະເຂົາບໍ່ຮູ້ຫຍັງ? __________________________________

**37** ຂໍໃຫ້ທ່ານອ່ານຄວາມປຽບທຽບປະການທີສາມໃນ ມັດທາຍ 7:24-29 ຂໍ້ພະຄຳພີເຫຼົ່ານັ້ນສອນໃຫ້ຕັ້ງຊີວິດ ຢ່າງຄືງທີ່ຮາກຖານຢ່າງຄືງທີ່ນັ້ນຈະຕັ້ງໄວ້ເທິງ ດານຫີນ ຫຼື ຫາດຊາຍ?

______________________________________________________________

**38** ໃນຂໍ້ 24 ພະເຢຊູ ກ່າວວ່າ "ເຫດສັນນັ້ນທຸກຄົນທີ່ຟັງຄຳເຫຼົ່ານີ້ຂອງເຮົາແລະປະຕິບັດຕາມ..." "ຄຳເຫຼົ່ານີ້"ອ້າງ ເຖິງຄຳໃດ? ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ
ກ. ພະບັນຍັດຂອງໂມເຊ
ຂ. ຄຳເທດສະໜາຢູ່ຈ້າຍພູ
ຄ. ຄຳປະກາດບໍ່ຈິງ

**39** ພະເຢຊູອ້າງເຖິງຄຳເທດສະໜາຢູ່ຈ້າຍພູແທ້ ຖ້າພວກຄູ່ດສະຕຽນເຮົາຈະກໍ່ສ້າງຊີວິດຂອງເຮົາໃນບ່ອນຄົງທີ່ໝາຍ ຄວາມວ່າເຮົາຈະດຳເນີນຊີວິດແຕ່ລະມື້ຕາມຄວາມສັ່ງສອນຂອງ ພະເຢຊູຄູ່ດເປັນຕົ້ນຄຳເທດສະໜາຢູ່ຈ້າຍພູນັ້ນ. ພວກເຮົາຈົ່ງກວດຊີວິດເອົາຕາມຫຼັກນັ້ນຢູ່ສະເໝີ ຄືຈົ່ງເບິ່ງຕົວຢ່າງເທາະ! ຖ້າເຮົາມັກກະວົນກະວາຍເລື່ອງໃນອະນາຄົດ ເຮົາຄວນຈະຍົກເອົາ ມັດທາຍ 6:25-34 ນີ້ນຳມາໃຊ້ໃນຊີວິດຈົ່ງຈະສະຫງົບໃຈໄດ້ ພະບິດາເຈົ້າໃນຟ້າສະຫວັນຊົງປົກປ້ອງຮັກສາເຮົາໄວ້ທັງເວັນທັງຄືນ. ຖ້າເຮົາມັກກ່າວໂທດຜູ້ອື່ນເຮົາຄວນຈະອ່ານກົດລະບຽບໃດໃນມັດທາຍບົດໃດຂໍ້ໃດ? ________________________________________

**40** ໃຫ້ທ່ານເອງແກ້ໄຂຄວາມໝາຍໃນຄຳເວົ້າ "ຈົ່ງສ້າງຕຶກຂອງຕົນເທິງດານຫີນ"? ________

______________________________________________________________

______________________________________________________________

**41** ໃຫ້ທ່ານຍົກຕົວຢ່າງ 3 ປະການທີ່ອ້າງເຖິງຄວາມຄົງທີ່ແລະບໍ່ຄົງທີ່:
(ຈົ່ງຕື່ມຄວາມໃສ່ບ່ອນຫວ່າງໃຫ້ຖືກ)
ກ. __________ ສອງປ່ອງ. ຂ. __________ ສອງຕົ້ນ. ຄ. __________ ສອງຫຼັງ.

**42** ກົດລະບຽບແຫ່ງຄວາມຄົງທີ່ ຢູ່ໃນ ມັດທາຍ ບົດໃດ ຂໍ້ໃດ? ______________________

ຝຶກ: ໃຫ້ກັບໄປເບິ່ງໜ້າປົກບົດນີ້ ແລ້ວຂຽນຄວາມທີ່ຍັງຂາດຂ້າງຊ້າຍວ່າເປັນກົດລະບຽບໃດຢູ່ບົດໃດຂໍ້ໃດ

**43** ໃຫ້ທ່ານວິເຄາະກົດລະບຽບແຫ່ງຄວາມຄົງທີ່ ດ້ວຍຂຽນຄວາມທີ່ຂາດໃຫ້ສຳເລັດໃນຕາຕະລາງຕໍ່ໄປນີ້:

| ຫົວເລື່ອງ: ກົດລະບຽບແຫ່ງ ____________________ | |
|---|---|
| ເຫັນຢູ່ໃນ ມັດທາຍ _____ : _____ ເຖິງ _____ | |
| ຕົວຢ່າງ 3 ປະການ (ອັນລະຄູ່ເປັນສ່ວນປະກອບ) | ບົດ ແລະ ຂໍ້ໃດ |
| 1. __________________________ | ______ ______ |
| 2. __________________________ | ______ ______ |
| 3. __________________________ | ______ ______ |

## ບາດນີ້ໃຫ້ເປີດເຮັດບົດເສັງກ່ອນ!

*ແຕ່ໃນໜ້າຕໍ່ໄປມີບົດ ຝຶກຫັດໃຫຍ່.*

ຝຶກ: ບົດຝຶກໃຫຍ່ນີ້ຈະເປັນປະໂຫຍດໃນການໃຫ້ພວກທ່ານທີ່ມາຮຽນປະຕິບັດຊີວິດຕາມຄວາມສັ່ງສອນໃນບົດເທດສະໜາຢູ່ຈ້າຍພູ. ມີບາດກ້າວ 4 ປະການທັງໝົດ ຈົ່ງເປີດເບິ່ງຕາຕະລາງວິເຄາະ ຄຳເທດສະໜາຂອງພະເຢຊູ ຢູຈ້າຍພູໃນທ້າຍບົດທີ 4

✷ບາດກ້າວໜຶ່ງ: ໃຫ້ທ່ານຊອກຫາຄຳວ່າ "ຖ່ອມຕົວ" "ຈຳເປັນ" ແລະ "ຄົງທີ່" ໃນແຖວຂອງ "ກົດລະບຽບໃດ" ແລ້ວຂຽນຂໍ້ພະຄຳພີເຫຼົ່ານັ້ນ ໃນຫ້ອງທີ່ຈຳກັດໄວ້ແລ້ວ ໃນແຖວທີ່ວ່າ "ຂໍ້ໃດ" ໃນແຖວ "ສ່ວນປະກອບ" ໃຫ້ ຂຽນຄວາມທີ່ຖືກ ຕາມຖັນແລະແຖວ.
(ເບິ່ງຄຳຕອບຢູ່ລຸ່ມໜ້ານີ້)

✷ ບາດກ້າວທີ ສອງ: ຕໍ່ໄປນີ້ມີລາຍຊື່ສິ່ງຈະຂັດ ຂວາງຊີວິດຄຼິດສະຕຽນ

1. ເຮົາອາດຈະຖືພະຄຳພີຕາມໂຕແທນທີ່ຈະຖືຕາມຈິດວິນຍານຈຶ່ງບໍ່ມີຄວາມສຸກ.
2. ເຮົາອາດຈະຫຼົງຜິດຈຶ່ງເຮັດໃຫ້ຊື່ຄຼິດສະຕຽນເໝັນຕໍ່ໜ້າຄົນນອກ.
3. ເຮົາອາດຈະສະສົມເງິນໄວ້ຫວັງໃຈວ່າຈະປ້ອງກັນການທຸກຍາກ.
4. ເຮົາໜ້າຊື່ໃຈຄົດ.
5. ເຮົາກະວົນກະວາຍເລື່ອງອານາຄົດ.
6. ເຮົາຟັງຜູ້ປະກາດພະທຳບໍ່ຈິງ.
7. ອ້ອນວອນແລະນະມັດສະການພະເຈົ້າໜ້ອຍ.
8. ເຮົາມີຄວາມຈອງຫອງໃນຕົວເອງແລະມັກກ່າວໂທດໃສ່ເພິ່ນ.
9. ຕອນໃດທີ່ມີຄວາມຫຍຸ້ງຍາກເຮົາເລີຍສະຫຼົດໃຈ.

ກ. ໃນລາຍຊື່ເຫຼົ່ານັ້ນການບົກຜ່ອງດ້ານວິນຍານທຳອິດຄືຫຍັງ ? ___________________

ຂ. ມີກົດລະບຽບໃດໃນຕາຕະລາງທີ່ຍົກວິທີແກ້ບັນຫານັ້ນ ? ______________________

✷ ບາດກ້າວທີ ສາມ: ໃຫ້ທ່ານຂຽນການບົກຜ່ອງດ້ານວິນຍານນັ້ນໃນຫ້ອງທີ່ເໝາະສົມ ໃຕ້ແຖວທີ່ວ່າ "ການນຳມາໃຊ້"

✷ ບາດກ້າວທີ ສີ່ : ໃນທຸກຫ້ອງທີ່ຍັງຂາດບໍ່ມີຄຳຂຽນໃຫ້ທ່ານຂຽນສິ່ງທີ່ຕ້ອງການຕາມແຖວແລະຖັນທີ່ຖືກ (ກວດຕາມຄຳຕອບຂ້າງລຸ່ມນີ້)

*(ເບິ່ງຄຳຕອບຕໍ່ໄປ)*

## ຄຳຕອບ:

**1** *ກ. ສາມຈຸດ. ຂ. ສາມຈຸດ.*

**2** *ຂີ້ເຫຍື່ອ ແລະ ໄມ້ທ່ອນ.*

**3** *ກ. ຜິດໜ້ອຍ ຂ. ຜິດຫຼາຍ*

**4** *ຄວນຈະຮັບຮູບບາບຂອງຕົວເອງແລ້ວປະບາບນັ້ນ ກ່ອນຈະວິຈານຜູ້ອື່ນ.(ຄຳຄ້າຍກັນກໍ່ໄດ້)*

**5** *ຖ່ອມຕົວ*

**6** *ຂ. ຖືກ.*

**7** *ກ. ຂີ້ເຍື່ອ ແລະ ໄມ້ທ່ອນ. ຂ. ບໍ່ມີຄຳຕອບຕາຍຕົວແລກປ່ຽນຄວາມຄິດກັນ.*

**8** *ບໍ່ມີຄຳຕອບຕາຍຕົວໃຫ້ແລກປ່ຽນຄວາມຄິດເຫັນກັບໝູ່ໃນປະຊຸມ.*

**9** *ຂໍ້ 6*

**10** *ບໍ່*

**11** *ມທ 7:1-6*

**12** *ຂໍ ຊອກ ເຄາະ*

**ຄຳຕອບ (ຕໍ່):**

**13** *ອ້ອມວອນ*

**14** *ພະເຈົ້າ*

**15** *ເຂົາ ປາ*

**16** *ພະວິນຍານບໍລິສຸດ*

**17** *ຄ. ຖືກ*

**18** *ກ. ຄ. ງ. ແລະ ສ. ຖືກ*

**19** *ກ. ແລະ ຄ. ຖືກ*

**20** *ກ. ຖືກ*

**21** *ຄ. ຖືກ*

**22** *ກ. ພະເຍຊູ. ຂ. ນັກທຳ*

**23** *ກ. ຜູ້ສ້າງໃສ່ເທິງດານຫີນ ຂ. ຜູ້ສ້າງໃສ່ຫາດຊາຍ. ຄ.ຕຶກ*

**24** *ກ. ຖືກ.*

**25** *ກ. ປະຕູ ຂ. ຕົ້ນໄມ້*

**26** *ຮູບ ຈ... ຮູບ ສ... ຮູບ ຊ*

**27** *ພະເຍຊູ (ທັງສອງຂໍ້)*

**28** *ລະວັງຜູ້ປະກາດພະທຳບໍ່ຈິງ.*

**29** *ກ. ແກະ ຂ. ໝາໄນ ຄ. ໜ້າຊື່ໃຈຄົດ ງ. ນັກທຳ ແລະ ຟາລິຊາຍ*
*ຈ. ບໍ່ມີຄຳຕອບຕາຍຕົວ ຈະຕອບ " ພວກເຈົ້າຟ້າ " ແລະ " ສາດສະໜາບາຮາຍ " ກໍ່ໄດ້*

**30** *ກ. ປະກາດພະທຳ ຂ. ຂັບໄລ່ຜີອອກ ຄ. ເຮັດການອິດທິລິດຫຼາຍປະການ*

**31** *ຜູ້ທີ່ເຮັດຕາມນ້ຳພະໄທພະອົງ*

**32** *ກ. ຕົ້ນໄມ້ດີ ຂ. ຕົ້ນໄມ້ບໍ່ດີ ຄ. ຕົ້ນດີມີຜົນດີ*

**33** *ບໍ່ຈິງ*

**34** *ຂ. ຖືກ*

**35** *ຜົນຂອງເຂົາ*

**36** *ກ. ພະເຈົ້າ ຂ. ຜົນບໍ່ດີ ຄ. ນ້ຳພະໄທຂອງ ພະອົງ*

**37** *ດານຫີນ*

**38** *ຂ. ຖືກ*

**39** *ກົດລະບຽບແຫ່ງຄວາມຖ່ອມຕົວ ມທ 7:1-6*

**40** *ບໍ່ມີຄຳຕອບຕາຍຕົວເອົາແຕ່ໝູ່ເຫັນດີໃນປະຊຸມ*

**41** *ກ. ປະຕູ ຂ. ຕົ້ນໄມ້ ຄ. ຮາກຕຶກ*

**42** *ມທ 7:13-29*

## ຄຳຕອບ (ຕໍ່):

**43** *ແຫ່ງຄວາມຄຶງທີ່ ມັດທາຍ 7:13 ເຖິງ 29*

*1. ປະຕູ 7:13-14*

*2. ຕົນໄມ້ 7:15-23*

*3. ຮາກຕຶກ 7:24-29*

✸ *ບາດກ້າວທີ ໜຶ່ງ:*

| ຂໍ້ໃດ | ສ່ວນປະກອບ |
|---|---|
| 1 - 6 | ຂີ້ເຍື່ອແລະໄມ້ທ່ອນ |
| 7 - 12 | ອ້ອນວອນ |
| 13 - 29 | ປະຕູສອງປ່ອງ ຕົນໄມ້ສອງຕົນ ຮາກຕຶກສອງຢ່າງ |

✸ *ບາດກ້າວທີ ສອງ:* *ກ. ຖືພະຄຳພີຕາມໂຕອັກສອນຈຶ່ງບໍ່ມີສຸກ.*

*ຂ. ກົດລະບຽບແຫ່ງລັດອຳນາດ.*

✸ *ບາດກ້າວທີ ສີ່:*

| ກົດລະບຽບໃດ | ນຳມາໃຊ້ເພື່ອແກ້ບັນຫາໃດ |
|---|---|
| ປອດໄພ | ສະສົມເງິນໄວ້ |
| ຄວາມສຸກ | ຜູ້ທີ່ບໍ່ສະຫງົບໃຈ |
| ສະຫງົບໃຈ | ກະວົນ ກະວາຍ |
| ພາລະ | ຜູ້ຫຍິງຜິດເຮັດໃຫ້ຊື່ຄືດສະຫງຽບເໝັນ |
| ຖ່ອມຕົວ | ຈອງຫອງ |
| ລັດອຳນາດ | ຖືພະຄຳພີຕາມໂຕອັກສອນຈຶ່ງບໍ່ມີສຸກ. |
| ຈຳເປັນ | ຂາດບໍ່ອ້ອນວອນ |
| ຕໍ່ຕ້ານຄືນໜ້າຊື່ໃຈຄົດ | ໜ້າຊື່ໃຈຄົດ |
| ຄຶງທີ່ | ຜູ້ມີໃຈບໍ່ແນ່ນອນ |